# 1. ຊື່ຫຼັກສູດ

ພາສາລາວ: ປະລິນຍາໂທສາທາລະນະສຸກສາດ ສາຂາໂພຊະນາການ

ພາສາອັງກິດ: Master of Public Health in Nutrition

# 2. ຊື່ໃບປະກາສະນິຍະບັດ

ພາສາລາວ: ປະກາສະນິຍະບັດປະລິນຍາໂທສາທາລະນະສຸກສາດສາຂາໂພຊະນາການ

ພາສາອັງກິດ: Master of Public Health in Nutrition

# 3. ໜ່ວຍງານຮັບຜິດຊອບ

ໜ່ວຍງານຮັບຜິດຊອບໃນຫຼັກສູດນີ້ແມ່ນ: ຄະນະສາທາລະນະສຸກສາດ, ມະຫາວິທະຍາໄລ ວິທະຍາສາດ ສຸຂະພາບ, ສ ປປ ລາວ. ບ້ານເກົ້າຍອດ, ໜ່ວຍ 12, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ຖະໜົນ ສາມແສນໄທ, ໂທ: 021 240854, ແຟັກ 240854

# 4. ປັດຊະຍາ ແລະ ຈຸດປະສົງຂອງຫຼັກສູດ

## 4.1. ປັດຊະຍາ

### 4.1.1 ປະຫວັດຄວາມເປັນມາ

ເພື່ອຫຼຸດຜ່ອນການຂາດສານອາຫານ, ຫຼຸດຜ່ອນຄວາມສ່ຽງຕໍ່ການເຈັບເປັນ ແລະ ການເສຍຊີວິດທີ່ພົວພັນກັບການຂາດສານອາຫານໃນໄລຍະຍາວຂອງປະຊາຊົນລາວບັນດາເຜົ່າ ໂດຍການຍົກລະດັບ ຄວາມຮູ້, ຄວາມສາມາດ ແລະ ທັກສະດ້ານໂພຊະນາການໃຫ້ແກ່ພະນັກງານສາທາລະນະສຸກ ແລະ ຜູ້ຮັບຜິດຊອບ ວຽກ ານທີ່ກ່ຽວຂ້ອງໃຫ້ມີປະ ສິດທິຜົນ.

### 4.1.2 ເຫດຜົນ ແລະຄວາມສຳຄັນ

ຄະນະສາທາລະນະສຸກສາດ, ມະຫາວິທະຍາໄລ ວິທະຍາສາດ ສຸຂະພາບ ແມ່ນໜຶ່ງ ໃນເຈັດຄະນະວິຊາທີ່ຂຶ້ນກັບ ມວສ ໂດຍກົງ, ຊຶ່ງມີໜ້າທີ່ຈັດຕັ້ງການອົບຮົມລະດັບຫລັງປະລິນຍາຕີ, ຊຶ່ງປະກອບມີລະດັບແພດຊ່ຽວຊານຂັ້ນ 1, ຊ່ຽວຊານຂັ້ນ 2 ແລະ ລະດັບປະລິນຍາໂທ. ນັບແຕ່ປີ 2005 ຄະນະຫລັງປະຫາວິທະຍາໄລໄດ້ຈັດຕັ້ງປະຕິບັດການຮຽນ-ການສອນ ຫລັກສູດປະລິນຍາໂທສາທາລະນະສຸກສາດ, ຊຶ່ງໃນນີ້ປະກອບມີວິຊາໂພຊະນາການຈຳນວນ 02 ໜ່ວຍກິດ, ຫລັກສູດດັ່ງກ່າວໄດ້ຖືກຮັບຮອງ ແລະ ອະນຸມັດນຳໃຊ້ຈາກກະຊວງສຶກສາທິການ ແລະ ກິລາ, ໂດຍສະເພາະວິຊາໂພຊະນາການຈຳນວນ 02 ໜ່ວຍກິດ ຍັງບໍ່ພຽງພໍກັບຄວາມຮຽກຮ້ອງຕ້ອງການຂອງການພັດທະນາວຽກງານສາທາລະນະສຸກ, ໂດຍສະເພາະແມ່ນວຽກງານໂພຊະນາການ. ນອກຈາກນັ້ນ, ນັກໂພຊະນາການຢູ່ ສປປ ລາວມີພຽງຈຳນວນໜ້ອຍໜຶ່ງທີ່ຮຽນຈົບມາຈາກຕ່າງປະເທດ, ຊຶ່ງບໍ່ທັນຕອບສະໜອງວຽກງານໂພຊະນາການໄດ້ພຽງພໍ. ອີງຕາມແຜນ ຍຸດທະສາດ ການພັດທະນາບຸກຄະ ລາກອນສາທາລະນະສຸກຮອດປີ 2020,ຕ້ອງມີນັກວິຊາການຄົບທຸກສາຂາວິຊາຕາມຈຳນວນທີ່ຕ້ອງການແລະມີຄວາມສາມາດໃນລະດັບຊົງເຂດວິຊາ. ສະນັ້ນ, ເພື່ອຕອບສະໜອງກັບ ບັນຫາ ດັ່ງກ່າວ

ຄະນະສາທາລະນະສຸກສາດ, ມວສ ຈຶ່ງມີຄວາມຕ້ອງການພັດທະນາຫລັກສູດປະລິນຍາໂທວິທະຍາສາດສາຂາໂພຊະນາການຂຶ້ນ.

### 4.2 ຈຸດປະສົງຂອງຫລັກສູດ

ຈຸດປະສົງຂອງຫລັກສູດເພື່ອກໍ່ສ້າງນັກສຶກສາຕາມ 3 ລັກນະ ແລະ 5 ຫລັກມູນຂອງການສຶກສາຄື: ມີສິນທຳປະຕິວັດ, ໃຫ້ເປັນພົນລະເມືອງທີ່ດີ, ມີຄຸນສົມບັດ, ມີແນວຄິດການເມືອງຖືກຕ້ອງ, ມີຄວາມຈົງຮັກພັກດີຕໍ່ພັກ ແລະ ລັດຖະບານ, ມີແນວຄິດຮັກຊາດ, ມີຄວາມສາມັກຄີ, ຮູ້ຮັກສາຮີດຄອງປະເພນີອັນດີງາມຂອງຊາດ ແລະ ສິ່ງແວດລ້ອມ ແລະ ມີຄວາມພາກພູມໃຈໃນຄວາມເປັນຊາດລາວ.

- ເພື່ອຍົກສູງຄວາມຮູ້, ຄວາມສາມາດ ແລະ ທັກສະທາງດ້ານຄຸ້ມຄອງໂພຊະນາການ ໃຫ້ແກ່ບຸກຄະລາກອນສາທາລະນະສຸກ.
- ເພື່ອຍົກສູງຄວາມສາມາດທາງດ້ານເຕັກນິກວິຊາການໃນການຄຸ້ມຄອງກໍລະນີ ແລະ ໂພຊະນາບຳບັດ
- ເພື່ອຍົກສູງຄວາມຮູ້ ແລະ ທັກສະຢ່າງມີປະສິດທິຜົນ ໂດຍການປະສານງານ, ການແກ້ໄຂບັນຫາ, ການວາງແຜນ, ຄຸ້ມຄອງໂຄງການ, ຕິດຕາມກວດກາ ແລະ ປະເມີນຜົນ.
- ເພື່ອຍົກສູງຄວາມຮູ້ ແລະ ທັກສະໃນການເຮັດບົດຄົ້ນຄ້ວາວິທະຍາສາດກ່ຽວກັບໂພຊະນາການ ແລະ ໂພຊະນາບຳບັດ.

## 5. ການກຳນົດການເປີດສອນ

ຫລັກສູດຈະລິເລີ່ມປີ 2014 ຫລັງຈາກຈະໄດ້ດຳເນີນການຮຽນ-ການສອນເປັນປົກກະຕິ ແລະ ນັກສຶກສາທີ່ຈົບຈາກຫລັກສູດນີ້ໄປແລ້ວແຕ່ລະລຸ້ນຈະມີການປະເມີນ ແລະ ປັບປຸງຫລັກສູດນີ້ຄືນໃໝ່.

## 6. ຄາດຄະເນແຜນການຮັບນັກສຶກສາ

| ສົກຮຽນ | ຈຳນວນນັກສຶກສາ | | ຈຳນວນລວມ | ຄາດຄະເນນັກສຶກສາຮຽນຮຽນຈົບ |
|---|---|---|---|---|
| | ປ 1 | ປ 2 | | |
| 2015-2016 | 10 | | 10 | |
| 2017-2018 | 10 | 10 | 20 | 10 |
| 2018-2019 | 10 | 10 | 20 | |

## 7. ເງື່ອນໄຂຂອງຜູ້ເຂົ້າສຶກສາ

### ກ. ສຳລັບພະນັກງານ

- ພະນັກງານຂະແໜງການສາທາລະນະສຸກຈົບປລິນຍາຕີ ໂດຍສະເພະທາງດ້ານວິທະຍາສາດການແພດ (ແພດທົ່ວໄປ, ເພຊັສສາດ, ເຕັກນິກການແພດ, ພະຍາບານຍົກເວັ້ນຄະນະທັນຕະແພດ).
- ພະນັກງານສາທາລະນະສຸກທີ່ເຮັດວຽກທັງພາກສ່ວນລັດແລະພາກສ່ວນອົງການຈັດຕັ້ງສາກົນ
- ອາຍຸຕໍ່າກວ່າ 45 ປີ.
- ມີປະສົບປະການໃນວຽກທີ່ກ່ຽວຂ້ອງ: ມີປະສົບປະການຢ່າງນ້ອຍ 2 ປີ ໃນສາຂາທີ່ກ່ຽວຂ້ອງ ແລະ ຖືກບົ່ງຊື່ຈາກອົງການຈັດຕັ້ງທີ່ກ່ຽວຂ້ອງ.

- ຕ້ອງມີຄວາມຮູ້ພາສາອັງກິດຂັ້ນປານກາງ.
- ຕ້ອງຜ່ານການສອບເສັງຄັດເລືອກ,ຊຶ່ງອີງໃສ່ກົດລະບຽບຂອງມະຫາວິທະຍາໄລວິທະຍາສາດສຸຂະພາບ , ກະຊວງສາທາລະນະສຸກ.

**ຂ. ສໍາລັບນັກສຶກສາຈົບປະລິນຍາຕີໃໝ່:**

- ຄະແນນສະສົມ CGPA = 2.5
- ຕ້ອງມີຄວາມຮູ້ພາສາອັງກິດຂັ້ນປານກາງ.
- ຕ້ອງຜ່ານການສອບເສັງຄັດເລືອກ,ຊຶ່ງອີງໃສ່ກົດລະບຽບຂອງມະຫາວິທະຍາໄລວິທະຍາສາດສຸຂະພາບ , ກະຊວງສາທາລະນະສຸກ.

## 8. ວິທີການຄັດເລືອກຜູ້ເຂົ້າສຶກສາ

ຜູ້ທີ່ຈະເຂົ້າມາຮຽນເປັນນັກໂພຊະນາການຕ້ອງຜ່ານຂັ້ນຕອນຂອງການຄັດເລືອກດັ່ງຕໍ່ໄປນີ້:

1. ກະຊວງສາທາລະນະສຸກ ແລະ ອົງການຈັດຕັ້ງທີ່ຜູ້ກ່ຽວສັງກັດຢູ່ເປັນຜູ້ພິຈາລະນາຄັດເລືອກມາສອບເສັງຕາມມາດຕະຖານທີ່ວາງອອກ
2. ການສອບເສັງຄັດເລືອກເອົານັກສຶກສາທີ່ຈະເຂົ້າຮຽນໂພຊະນາການເປັນ 2 ຂັ້ນຕອນຄື: ພາກສໍາພາດ ແລະ ພາກຂຽນຈາກຄະນະກໍາມະການທີ່ໄດ້ແຕ່ງຕັ້ງຂຶ້ນຈາກຄະນະຫຼັງມະຫາວິທະຍາໄລ:

- ການທົດສອບທາງດ້ານໂພຊະນາການ 40% (100 MCQ)
- ການທົດສອບວິທະຍາສາດພື້ນຖານ 20% (50 MCQ)
- ການທົດສອພາສາອັງກິດທົ່ວໄປ 20%
- ການສໍາພາດຄວາມຮູ້ທົ່ວໄປກ່ຽວກັບສາທາລະນະສຸກ 20 %

ນັກສຶກສາຜູ້ທີ່ໄດ້ຄະແນນສູງສຸດຄະແນນລວມທີ່ຄັດເລືອກເອົາເຂົ້າຮຽນແມ່ນຢ່າງໜ້ອຍ 60%

## 9. ການຈັດຕັ້ງການຮຽນ-ການສອນ

ການຈັດຕັ້ງການຮຽນ-ການສອນຫລັກສູດປະລິນຍາໂທວິທະຍາສາດສາຂາໂພຊະນາການ, ຊຶ່ງການຮຽນການສອນແບບເຕັມເວລາປະກອບດ້ວຍ 4 ພາກຮຽນຂອງການສຶກສາ (ມີ 4 ພາກຮຽນແຕ່ລະພາກຮຽນມີ 20 ອາທິດ (30/ຊມ/ອາ ທິດລວມທັງພາກທິດສະດີ ແລະ ປະຕິບັດ).

- ພາກທິດສະດີໃຊ້ເວລາ 14 ເດືອນ
- ພາກສະໜາມ/ວິທະຍານິພົນແມ່ນໃຊ້ເວລາ 6 ເດືອນ ມີ 2 ສາຍ:
  - ໂພຊະນາການຊຸມຊົນລົງພາກປະຕິບັດຕົວຈິງຢູ່ຊຸມຊົນ ແລະ ເຮັດບົດວິທະຍານິພົນ
  - ໂພຊະນາບໍາບັດລົງພາກປະຕິບັດຕົວຈິງຢູ່ໂຮງໝໍ ແລະ ເຮັດບົດວິທະຍານິພົນ
- ການປະເມີນຜົນນັກສຶກສາແມ່ນດໍາເນີນໃນ 02 ຮູບແບບຄະແນນສະສົມsommative ແລະ ເສັງຈົບລາຍວິຊາ formative, ປ້ອງກັນວິທະຍານິພົນ
- ຫລັກສູດປະລິນຍາໂທວິທະຍາສາດ ສາຂາໂພຊະນາການສອນເປັນພາສາລາວ

## 10. ໄລຍະເວລາຂອງການສຶກສາ

ຫລັກສູດປລິນຍາໂທສາທາລະນະສຸກສາດສາຂາໂພຊະນາການກໍານົດ 02 ປີ.

11. **ເນື້ອໃນໂຄງຮ່າງຂອງຫລັກສູດ**

11.1. ການກຳນົດໜ່ວຍກິດເຂົ້າໃນຫລັກສູດ

ການຄິດໄລ່ໜ່ວຍກິດແມ່ນອີງຕາມມາດຕະຖານຂອງກະຊວງສຶກສາທິການແລະກິລາຊຶ່ງມີລາຍລະອຽດດັ່ງລຸ່ມນີ້.

- ພາກທິດສະດີ 1 ໜ່ວຍກິດເທົ່າກັບ 16 ຊົ່ວໂມງ
- ການສຳມະນາ, ພາກສະໜາມ/ບົດວິທະຍານິພົນ 1 ໜ່ວຍກິດເທົ່າ 48-96 ຊົ່ວໂມງ

ໝວດວິຊາບັງຄັບ: 31 ໜ່ວຍກິດ
ຂຽນບົດວິທະຍານິພົນ: 12 ໜ່ວຍກິດ
ໝວດວິຊາເລືອກ 4 ໜ່ວຍກິດ
ລວມ: 47 ໜ່ວຍກິດ

**11.2. ການຈັດແບ່ງລາຍວິຊາຮຽນໃນແຕ່ລະພາກຮຽນ**

**ກ. ວິຊາບັງຄັບ**

| ລ/ດ | ລະຫັດວິຊາ | ຊື່ລາຍວິຊາ | ຈຳນວນໜ່ວຍກິດ |
|---|---|---|---|
| 01 | PH540 NUPL | ປັດຊະຍາ (Philosophy) | 1 (1-1-0) |
| 02 | PH540 NU RM | ວິທີວິທະຍາໃນການຄົ້ນຄ້ວາ(Research Methodology) | 3(2-3-0) |
| 03 | PH540 NU QM | ວິທີການຄົ້ນຄວາແບບຄຸນນະພາບ (Qualitative Research Methodology) | 2 (1-3-0) |
| 04 | PH540 NU B | ຊີວະສະຖິຕິ (Biostatistics) | 3 (2-3-0) |
| 05 | PH540 NU EPI | ລະບາດວິະທຍາ (Epidemiology) | 3 (2-3-0) |
| 06 | PH540 NU BNS | ຄວາມຮູ້ພື້ນຖານດ້ານໂພຊະນາການ (Basic Nutrition Sciences) | 1 (1-1-0) |
| 07 | PH540 NU FC | ວົງຈອນຂອງດຳລົງຊີວິດໃນຮູບແບບການບໍລິໂພກອາຫານ Food Consumption Pattern during life cycle | 2 (1-3-0) |
| 08 | PH540 NU FS | ການຄ້ຳປະກັນສະບຽງອາຫານ Food Security and Food safety | 2 (1-3-0) |
| 09 | PH540 NU A | ການປະເມີນພາວະໂພຊະນາການ Nutrition Assessment | 3 (2-3-0) |
| 10 | PH540 NU ND | ໂພຊະນາການດ້ານຄລີນິກ Clinical Nutrition | 2 (1-3-0) |
| 11 | PH540 NU NHE | ສຸຂະສຶກສາ ແລະ ການສົ່ງເສີມໂພຊະນາການ Nutrition Health Education and Promotion | 2 (1-3-0) |
| 12 | PH540 NU NP | ການວາງແຜນໂພຊະນາການສຸຂະພາ ແລະ ການບໍລິຫານ | 3 (2-3-0) |

| | | | |
|---|---|---|---|
| | | ຈັດການ<br>Nutrition Planning & Management | |
| 13 | PH540<br>NU PH | ສາທາລະນະສຸກສາດ ແລະ ການອະນາໄມອາຫານ<br>Public Health and Food Hygiene | 2 (1-3-0) |
| 14 | PH540<br>NU EH | ອະນາໄມສິ່ງແວດລ້ອມ ແລະ ໂພຊະນາການ<br>Environment health and Nutrition | 2 (1-3-0) |
| 15 | PH540<br>NU SM | ສໍາມະນາໂພຊະນາການເພື່ອສຸຂະພາບ<br>Seminar in Nutrition for Health | 2 (1-3-0) |
| | ລວມ | | 33ໜ່ວຍກິດ |

**ຄ. ພາກສະໜາມ ແລະ ວິທຍະຍານິພົນ**

| ລ/ດ | ລະຫັດວິຊາ | ຊື່ລາຍວິຊາ | ຈໍານວນໜ່ວຍກິດ |
|---|---|---|---|
| 16 | PH540<br>NUTH | Thesis | 12 ໜ່ວຍກິດ |

**11.3. ແຜນການຮຽນ-ການສອນ ໃນແຕ່ລະພາກຮຽນ, ແຕ່ລະປີ**

**11.3.1 ປີທີ່ 1**

**ກ. ພາກຮຽນທີ່ 1 ມີ 14 ໜ່ວຍກິດ**

| ລະຫັດວິຊາ | ຊື່ລາຍວິຊາ | ຈໍານວນໜ່ວຍກິດ |
|---|---|---|
| PH540<br>NU PL | ປັດຊະຍາ (Philosophy) | 1 (1-1-0) |
| PH540<br>NU BNS | ຄວາມຮູ້ພື້ນຖານດ້ານໂພຊະນາການ<br>(Basic Nutrition Sciences) | 1 (1-1-0) |
| PH540<br>NU NA | ການປະເມີນພາວະໂພຊະນາການ Nutrition Assessment | 3 (2-3-0) |
| PH540<br>NU FC | ວົງຈອນຂອງດໍາລົງຊີວິດໃນຮູບແບບການບໍລິໂພກອາຫານ<br>Food Consumption Pattern during life cycle | 2 (1-3-0) |
| PH540<br>NU NP | ການວາງແຜນໂພຊະນາການສຸຂະພາ ແລະ ການບໍລິຫານ ຈັດການ<br>Nutrition Planning & Management | 3 (2-3-0) |
| PH540<br>NU NHE | ສຸຂະສຶກສາ ແລະ ການສົ່ງເສີມໂພຊະນາການ<br>Nutrition Health Education and Promotion | 2 (1-3-0) |
| PH540<br>NU ND | ໂພຊະນາການດ້ານຄລີນິກ Clinical Nutrition | 2 (1-3-0) |

**ຂ. ພາກຮຽນທີ່ 2 ມີ 14 ໜ່ວຍກິດ**

| ລະຫັດວິຊາ | ຊື່ລາຍວິຊາ | ຈໍານວນໜ່ວຍກິດ |
|---|---|---|
| PH540<br>NU PH | ສາທາລະນະສຸກສາດ ແລະ ການອະນາໄມອາຫານ<br>Public Health and Food Hygiene | 2 (1-3-0) |
| PH540 | ອະນາໄມສິ່ງແວດລ້ອມ ແລະ ໂພຊະນາການ | 2 (1-3-0) |

| | | |
|---|---|---|
| NU EH | Environment health and Nutrition | |
| PH540<br>NU FS | ການຄໍ້າປະກັນສະບຽງອາຫານ<br>Food Security and Food safety | 2 (1-3-0) |
| PH540<br>NU EPI | ລະບາດວິະທຍາ (Epidemiology) | 3 (2-3-0) |
| PH540<br>NU RM | ວິທີວິທະຍາໃນການຄົ້ນຄ້ວາ(Research Methodology) | 3(2-3-0) |
| PH540<br>NU QM | ວິທີກາຄົ້ນຄວາແບບຄຸນນະພາບ<br>(Qualitative Research Methodology) | 2 (1-3-0) |

**11.3.2 ປີທີ 2**

ກ. ພາກຮຽນທີ່ 1 ແລະ 2 ມີ 15 ໜ່ວຍກິດ

| **ລະຫັດວິຊາ** | **ຊື່ລາຍວິຊາ** | **ຈໍານວນໜ່ວຍກິດ** |
|---|---|---|
| PH540<br>NU B | ຊີວະສະຖິຕິ (Biostatistics) | 3 (2-3-0) |
| PH540<br>NU SM | Seminar in Nutrition for Health | 2 (1-3-0) |
| PH540<br>NU TH | Thesis | 12 |

ຂ. ໝວດວິຊາເລືອກ(ຈໍານວນວິຊາ, ວິຊາລະ 02 ໜ່ວຍກິດ, ແຕ່ໃຫ້ເລືອກ 2 ວິຊາລວມເປັນ 4 ໜ່ວຍກິດ)

| **ລະຫັດວິຊາ** | **ຊື່ລາຍວິຊາ** | **ຈໍານວນໜ່ວຍກິດ** |
|---|---|---|
| PH540<br>NUCN | Current Topic in Nutrition | **2(1-3-0)** |
| PH540<br>NUMCN | Maternal and child Nutrition | **1(0-3-0)** |
| PH540<br>NUE | Nutrition of the Elderly | **1(0-3-0)** |